ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 483/ຈຂອປ

ອັດຕະປື, ວັນທີ 21 ເມສາ 2023

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ແລະ ການນໍາໃຊ້ຢາປາບສັດຕູພືດ ພາຍໃນແຂວງອັດຕະປື

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກໍາ (ສະບັບປັບປຸງ) ເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍປ້ອງກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດໍາລັດຂອງລັດຖະບານວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
- ອີງຕາມ ມະຕິຂອງກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 14/ສພຂ, ລົງວັນທີ 23/2/2023 2023 ກ່ຽວກັບການຮັບຮອງເອົານິຕິກໍາໃຕ້ກົດໝາຍຂອງອົງການປົກຄອງແຂວງ ຈໍານວນ 2 ສະບັບ ໃນຂົງເຂດວຽກງານກະສິກໍາ ແລະ ປ່າໄມ້ແຂວງ.

### ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການນໍາໃຊ້ ແລະ ການຕິດຕາມ, ກວດກາການເຄື່ອນໄຫວວຽກງານຢາປາບສັດຕູພືດ ເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພຂອງຢາປາບສັດຕູພືດ ຕໍ່ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ແນໃສ່ເຮັດໃຫ້ການຜະລິດກະສິກໍາໄປຕາມທິດກະສິກໍາສະອາດ, ສີຂຽວ, ຍືນຍົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

**ມາດຕາ 2 ການຄຸ້ມຄອງ ແລະ ການນໍາໃຊ້ຢາປາບສັດຕູພືດ**

ການຄຸ້ມຄອງ ແລະ ການນໍາໃຊ້ຢາປາບສັດຕູພືດ ແມ່ນການຈັດຕັ້ງປະຕິບັດມາດຕະການກ່ຽວກັບການຄຸ້ມຄອງ, ການນໍາໃຊ້ ແລະ ການດໍາເນີນທຸລະກິດຢາປາບສັດຕູພືດ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ເພື່ອຮັບປະກັນຄວາມປອດໄພ ຕໍ່ ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 3 ການອະທິບາຍສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຢາປາບສັດຕູພືດ** ໝາຍເຖິງ ທາດ ຫຼື ທາດປະສົມເຄມີ ລວມທັງຊີວະພາບ ນໍາໃຊ້ເພື່ອຂັບໄລ່, ທໍາລາຍ, ຄວບຄຸມສັດຕູພືດ ແລ ພາຫະນໍາເຊື້ອພະຍາດ ຫຼື ເພື່ອຄວບຄຸມການຈະເລີນເຕີບໂຕຂອງພືດ;

2. **ສັດຕູພືດ** ໝາຍເຖິງ ພືດທີ່ບໍ່ຕ້ອງການ, ແມງໄມ້, ສັດ ແລະ ເຊື້ອຈຸລິນຊີທີ່ສ້າງຄວາມເສຍຫາຍແກ່ພືດ, ຜະລິດຕະພັນພືດ ແລະ ສິ່ງແວດລ້ອມ;

3. **ພາຫະນໍາເຊື້ອພະຍາດ** ໝາຍເຖິງ ສິ່ງທີ່ມີຊີວິດໃດໜຶ່ງທີ່ເປັນຕົວນໍາເຊື້ອພະຍາດຕິດແປດມາສູ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ເປັນຕົ້ນ ພືດ, ສັດ, ແມງກະສາບ ແລະ ຍຸງ;

4. **ຢາປາບສັດຕູພືດຫ້າມນໍາໃຊ້** ໝາຍເຖິງ ຢາປາບສັດຕູພືດທີ່ຫ້າມຜະລິດ, ນໍາເຂົ້າ, ຈໍາໜ່າຍ, ນໍາໃຊ້ ແລະ ການເຄື່ອນໄຫວອື່ນໆ ເພື່ອປົກປ້ອງສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມ ລວມທັງຢາປາບສັດຕູພືດທີ່ຖືກຍົກເລີກຈາກບັນຊີອະນຸຍາດນໍາໃຊ້ໃນ ສປປ ລາວ;

5. **ຢາປາບສັດຕູພືດປອມ** ໝາຍເຖິງ ຜະລິດຕະພັນທີ່ຜະລິດ ແລະ ຫຸ້ມຫໍ່ຄ້າຍຄືກັບຜະລິດຕະພັນທີ່ໄດ້ຂຶ້ນທະບຽນແລ້ວແຕ່ມີສ່ວນປະກອບທາດພິດ, ເຄື່ອງໝາຍການຄ້າ ຫຼື ອາຍຸການນໍາໃຊ້ບໍ່ກົງກັບສະຫຼາກ;

6. **ຢາປາບສັດຕູພືດທີ່ບໍ່ໄດ້ມາດຕະຖານ** ໝາຍເຖິງ ຢາປາບສັດຕູພືດທີ່ມີທີ່ມີທາດພິດໜ້ອຍ ຫຼື ຫຼາຍກ່ວາ ມີສິ່ງເຈືອປົນ ຫຼື ຄຸນລັກສະນະອື່ນທີ່ບໍ່ຖືກຕ້ອງຕາມມາດຕະຖານທີ່ໄດ້ຂຶ້ນທະບຽນ;

7. **ຢາປາບສັດຕູພືດເສຍຄຸນລັກສະນະ** ໝາຍເຖິງ ຜະລິດຕະພັນຢາປາບສັດຕູພືດທີ່ໝົດອາຍຸການນໍາໃຊ້ ຕາມທີ່ສະແດງໄວ້ໃນສະຫຼາກ ແລະ ເປັນຢາປາບສັດຕູພືດທີ່ປ່ຽນສະພາບຈາກລັກສະນະເດີມເປັນຕົ້ນຈັບກັນເປັນກ້ອນ, ປ່ຽນສີ ແລະ ລັກສະນະອື່ນ;

8. **ສິ່ງເສດເຫຼືອຢາປາບສັດຕູພືດ** ໝາຍເຖິງ ພາຊະນະບັນຈຸ, ຢາປາບສັດຕູພືດຕົກຄ້າງ ແລະ ອຸປະກອນຮັບໃຊ້;

9. **ການບໍາບັດຢາປາບສັດຕູພືດ** ໝາຍເຖິງ ຂະບວນການຫຼຸດຜ່ອນມົນລະພິດທີ່ເກີດຈາກການເຄື່ອນໄຫວວຽກງານຢາປາບສັດຕູພືດ ດ້ວຍການນໍາໃຊ້ເຕັກນິກ, ເຄື່ອງຈັກ ຫຼື ວັດຖຸອຸປະກອນຕ່າງໆ;

10. **ການກໍາຈັດຢາປາບສັດຕູພືດ** ໝາຍເຖິງ ການຈູດ, ການຝັງດິນ ຫຼື ນໍາໃຊ້ວິທີການອື່ນ ເພື່ອທໍາລາຍ ຫຼື ແຍກປ່ຽວສິ່ງເສດເຫຼືອຢາປາບສັດຕູພືດ;

11. **ສານອອກລິດ** ໝາຍເຖິງ ສ່ວນປະກອບໃດໜຶ່ງຂອງຢາປາບສັດຕູພືດທີ່ເຮັດໃຫ້ຢາປາບສັດຕູພືດອອກລິດ ເພື່ອຂັບໄລ່, ທໍາລາຍ, ຄວບຄຸມສັດຕູພືດ ແລະ ພາຫະນໍາເຊື້ອພະຍາດ ຫຼື ຄວບຄຸມການຈະເລີນເຕີບໂຕຂອງພືດ;

12. **ສານພິດຕົກຄ້າງ** ໝາຍເຖິງ ສານປະກອບສະເພາະໃດໜຶ່ງຂອງຢາປາບສັດຕູພືດ ທີ່ຕົກຄ້າງຢູ່ໃນພືດ, ດິນ, ນໍ້າ, ອາຫານ, ສິນຄ້າກະສິກໍາ, ອາຫານສັດທີ່ເກີນຄ່າມາດຕະຖານ ຕາມການກໍານົດຂອງກະຊວງກະສິກໍາ ແລະ ປ່າໄມ້, ອົງການຈັດຕັ້ງສາກົນ ຫຼື ລະບຽບການທີ່ກ່ຽວຂ້ອງ;

13. **ຢາປາບສັດຕູພືດຊີວະພາບ** ໝາຍເຖິງ ເຊື້ອຈຸລິນຊີ, ທາດປະສົມເຄມີ ຊີວະພາບ ແລະ ສານສະກັດຈາກພືດທີ່ນໍາໃຊ້ ເພື່ອຫຼຸດຜ່ອນປະຊາກອນຂອງສັດຕູພືດ;

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຢາປາບສັດຕູພືດ**

ລັດເອົາໃຈໃສ່ວຽກງານຢາປາບສັດຕູພືດ ດ້ວຍການບໍາລຸງສ້າງບຸກຄະລາກອນ, ຄົ້ນຄວ້າ, ທົດລອງ, ພັດທະນາ ແລະ ຖ່າຍທອດເຕັກນິກວິຊາການກ່ຽວກັບຢາປາບສັດຕູພືດ ລວມທັງການກໍ່ສ້າງພື້ນຖານໂຄງລ່າງ ວັດຖຸເຕັກນິກ ຮັບປະກັນການຄຸ້ມຄອງວຽກງານດັ່ງກ່າວໃຫ້ມີປະສິດທິຜົນ.

ລັດຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນເຂົ້າໃນການຜະລິດຢາປາບສັດຕູພືດ ທີ່ເປັນອັນຕະລາຍໜ້ອຍ, ຢາປາບສັດຕູພືດຊີວະພາບ ແລະ ນໍາໃຊ້ເຕັກໂນໂລຊີ ທີ່ເປັນມິດຕໍ່ສິ່ງແວດລ້ອມ ເປັນ ຕົ້ນ ການປ້ອງກັນພືດແບບປະສົມປະສານ, ການປະຕິບັດກະສິກໍາທີ່ດີດ້ວຍການສະໜອງຂໍ້ມູນຂ່າວສານ, ເຕັກນິກວິ ຊາການ ແລະ ນະໂຍບາຍ ພາສີ, ອາກອນ ຕາມກົດໝາຍ.

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບວຽກງານຢາປາບສັດຕູພືດ**

ຫຼັກການພື້ນຖານກ່ຽວກັບວຽກງານຢາປາບສັດຕູພືດ ມີດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດສັງຄົມຂອງແຂວງ ແລະ ກົດໝາຍ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວແຂວງ;
3. ເອົາການປ້ອງກັນພືດເປັນສຳຄັນໂດຍການນຳໃຊ້ຢາປາບສັດຕູພືດທີ່ເປັນເຄມີເທົ່າທີ່ຈຳເປັນຕາມເຕັກນິກການປ້ອງກັນພືດແບບປະສົມປະສານ;
4. ຮັບປະກັນຄວາມປອດໄພ ຕໍ່ ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
5. ຮັບປະກັນຄວາມຖືກຕ້ອງ ຕາມມາດຕະຖານເຕັກນິກ;
6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານກ່ຽວກັບ ການນຳເຂົ້າ, ຈຳໜ່າຍ, ຂົນສົ່ງ, ສົ່ງຜ່ານ, ການນຳໃຊ້, ການໂຄສະນາ, ການບຳບັດ, ເກັບຮັກສາ, ທຳລາຍຖິ້ມ ແລະ ດຳເນີນທຸລະກິດຢາປາບສັດຕູພືດ ພາຍໃນແຂວງ.

## ໝວດທີ 2
## ປະເພດ ແລະ ບັນຊີຢາປາບສັດຕູພືດ

**ມາດຕາ 7 ປະເພດຢາປາບສັດຕູພືດ**

ຢາປາບສັດຕູພືດ ໄດ້ແບ່ງອອກເປັນ 5 ປະເພດ ຕາມລະດັບຄວາມເປັນອັນຕະລາຍດັ່ງນີ້:

| | |
|---|---|
| 1. ຢາປາບສັດຕູພືດອັນຕະລາຍຮ້າຍແຮງສູງ | ລະດັບຄວາມອັນຕະລາຍ Ia ແຖມສີແດງ; |
| 2. ຢາປາບສັດຕູພືດອັນຕະລາຍຮ້າຍແຮງ | ລະດັບຄວາມອັນຕະລາຍ Ib ແຖມສີແດງ; |
| 3. ຢາປາບສັດຕູພືດອັນຕະລາຍປານກາງ | ລະດັບຄວາມອັນຕະລາຍ II ແຖມສີເຫຼືອງ; |
| 4. ຢາປາບສັດຕູພືດອັນຕະລາຍໜ້ອຍ | ລະດັບຄວາມອັນຕະລາຍ III ແຖມສີຟ້າ; |
| 5. ຢາປາບສັດຕູພືດອັນຕະລາຍບໍ່ມີຜົນກະທົບທັນ | ລະດັບຄວາມອັນຕະລາຍ IV ແຖມສີຂຽວ. |

**ມາດຕາ 8 ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງສູງ**

ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງສູງ ແມ່ນຢາປາບສັດຕູພືດ ທີ່ມີຄຸນລັກສະນະທີ່ເປັນພິດກະທັນ ທັນຕໍ່ສຸຂະພາບ ແລະ ຊີວິດຂອງຄົນ, ນອກນີ້ຍັງສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕົກຄ້າງຍາວນານ.

ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງສູງ ບໍ່ອະນຸຍາດໃຫ້ ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ນຳໃຊ້ ແລະ ຄອບຄອງ.

**ມາດຕາ 9 ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງ**

ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງ ແມ່ນຢາປາບສັດຕູພືດທີ່ມີຄຸນລັກສະນະເປັນພິດກະທັນທັນຕໍ່ສຸ ຂະພາບ ແລະ ຊີວິດຂອງຄົນ, ນອກນີ້ຍັງສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕົກຄ້າງຍາວນານ.

ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງ ບໍ່ອະນຸຍາດໃຫ້ ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ນຳໃຊ້ ແລະ ຄອບຄອງ ຍົກເວັ້ນນຳໃຊ້ເພື່ອການຄົ້ນຄວ້າ ແລະ ການພັດທະນາເຕັກໂນໂລຊີຂອງລັດຖະບານ.

**ມາດຕາ 10 ຢາປາບສັດຕູພືດທີ່ເປັນອັນຕະລາຍປານກາງ**

ຢາປາບສັດຕູພືດທີ່ເປັນອັນຕະລາຍປານກາງ ແມ່ນຢາປາບສັດຕູພືດທີ່ມີຄຸນລັກສະນະທີ່ເປັນພິດກະທັນທັນຕໍ່ສຸ ຂະພາບ ແລະ ຊີວິດຂອງຄົນ.

ຢາປາບສັດຕູພືດທີ່ເປັນອັນຕະລາຍປານກາງ ອະນຸຍາດໃຫ້ ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ນຳກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ຂໍອະນຸຍາດ ນຳພະແນກກະສິກຳ ແລະ ປ່າໄມ້ແຂວງ ໂດຍຜ່ານຂະແໜງປູກຝັງ ແລະ ຢູ່ພາຍໃຕ້ການຄຸ້ມຄອງຕາມລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 11 ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ**

ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ ແມ່ນຢາປາບສັດຕູພືດ ທີ່ມີຄຸນລັກສະນະທີ່ກະທົບທັນຕໍ່ສຸຂະພາບ ແລະ ຊີວິດຂອງຄົນ.

ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ ອະນຸຍາດໃຫ້ ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ນຳກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ຂໍອະນຸຍາດ ນຳພະແນກກະສິກຳ ແລະ ປ່າໄມ້ແຂວງ ໂດຍຜ່ານຂະແໜງປູກຝັງ ແລະ ຢູ່ພາຍໃຕ້ການຄຸ້ມຄອງຕາມລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 12 ຢາປາບສັດຕູພືດທີ່ເປັນອັນຕະລາຍບໍ່ເປັນພິດກະທັນຫັນ**

ຢາປາບສັດຕູພືດທີ່ເປັນອັນຕະລາຍບໍ່ເປັນພິດກະທັນຫັນ ແມ່ນຢາປາບສັດຕູພືດ ທີ່ມີຄຸນລັກສະນະເປັນພິດ ຕໍ່ ສຸຂະພາບ ແລະ ຊີວິດຂອງຄົນ ແຕ່ບໍ່ອອກລິດທັນທີ.

ຢາປາບສັດຕູພືດທີ່ເປັນອັນຕະລາຍບໍ່ເປັນພິດກະທັນຫັນ ອະນຸຍາດໃຫ້ ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນນຳກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ຂໍອະນຸຍາດນຳພະແນກກະສິກຳ ແລະ ປ່າໄມ້ແຂວງ ໂດຍຜ່ານຂະແໜງປູກຝັງ ແລະ ຢູ່ພາຍໃຕ້ການຄຸ້ມຄອງຕາມລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ ຍົກເວັ້ນ ຢາປາບສັດຕູພືດຊີວະພາບ ທີ່ມີຄວາມປອດໄພຕໍ່ສຸຂະພາບ ຂອງຄົນ, ສັດ, ແລະ ສິ່ງແວດລ້ອມ ຊຶ່ງບໍ່ໄດ້ບັນຈຸໃສ່ພາສະນະເພື່ອຈຳໜ່າຍ.

## ໝວດທີ 3
## ຄວາມປອດໄພກ່ຽວກັບຢາປາບສັດຕູພືດ

**ມາດຕາ 13 ຄວາມປອດໄພກ່ຽວກັບຢາປາບສັດຕູພືດ**

ຄວາມປອດໄພກ່ຽວກັບຢາປາບສັດຕູພືດ ແມ່ນມາດຕະການທີ່ນຳໃຊ້ ເພື່ອຄຸ້ມຄອງວຽກງານຢາປາບສັດຕູພືດ ໃຫ້ມີຄວາມປອດໄພ ຊຶ່ງລວມມີ: ພາຊະນະບັນຈຸ ແລະ ການຫຸ້ມຫໍ່, ສະຫຼາກ ແລະ ການຕິດສະຫຼາກ, ການໂຄສະ ນາ, ການນຳເຂົ້າ, ການສົ່ງຜ່ານ, ການຂົນສົ່ງ, ຫານເກັບຮັກສາ ແລະ ມີໄວ້ໃນຄອບຄອງ, ການນຳໃຊ້, ການຕິດຕາມ ແລະ ລາຍງານ, ການບຳບັດ ແລະ ກຳຈັດຢາປາບສັດຕູພືດ ແລະ ການພັດທະນາວຽກງານຢາປາບສັດຕູພືດ.

**ມາດຕາ 14 ພາຊະນະບັນຈຸ ແລະ ການຫຸ້ມຫໍ່**

ພາຊະນະບັນຈຸ ແລະ ການຫຸ້ມຫໍ່ ຢາປາບສັດຕູພືດ ຕ້ອງຮັບປະກັນ ດັ່ງນີ້:

1. ມີຄວາມແຂງແກ່ນ, ທົນທານ ແລະ ຮັບປະກັນບໍ່ໃຫ້ມີຮົ່ວຊຶມ;
2. ບໍ່ເປື່ອຍ ແລະ ບໍ່ສົ່ງຜົນກະທົບຕໍ່ຄຸນນະພາບຂອງຢາປາບສັດຕູພືດພາຍໃຕ້ສະພາບປົກກະຕິຂອງການເກັບຮັກສາ ແລະ ນຳໃຊ້ໃນໄລຍະເວລາທີ່ກຳນົດ;
3. ບໍ່ຄ້າຍຄືກັບພາຊະນະບັນຈຸ ແລະ ການຫຸ້ມຫໍ່ອາຫານ ແລະ ເຄື່ອງດື່ມ;
4. ມີຝາປິດແໜ້ນເພື່ອບໍ່ໃຫ້ເດັກນ້ອຍເປີດໄດ້;
5. ມີຄວາມເໝາະສົມກັບແຕ່ລະຊະນິດຢາປາບສັດຕູພືດ;
6. ມີຄວາມປອດໄພໃນເວລາເກັບຮັກສາ ແລະ ນຳໃຊ້.

**ມາດຕາ 15 ສະຫຼາກ ແລະ ການຕິດສະຫຼາກ**

ຢາປາບສັດຕູພືດທຸກຊະນິດທີ່ ນໍາເຂົ້າ ແລະ ຈໍາໜ່າຍ ໃນແຂວງອັດຕະປື ຕ້ອງມີສະຫຼາກເປັນຮູບພາບ, ຂໍ້ຄວາມ ຫຼື ເປັນຕົວອັກສອນພາສາລາວ ແລະ ພາສາຕ່າງປະເທດ ເພື່ອສະແດງຊີ້ບອກຄວາມເປັນອັນຕະລາຍ ຄໍາແນະນໍາໃນການໃຊ້ ແລະ ການປ້ອງກັນຄວາມປອດໄພຂອງຢາປາບສັດຕູພືດ ລາຍລະອຽດໃຫ້ເບິ່ງຕາມຂໍ້ ແນະນໍາໃນການຕິດສະຫຼາກຢາປາບສັດຕູພືດ ທີ່ປະກາດໃຊ້ ສະບັບເລກທີ 1723/ກປ, ລົງວັນທີ 24 ກໍລະກົດ 2018 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຂໍ້ແນະນໍາການຕິດສະຫຼາກຢາປາບສັດຕູພືດ.

ສໍາລັບຮູບພາບ ແລະ ເນື້ອໃນຂອງສະຫຼາກ ແມ່ນກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້ເປັນຜູ້ກໍາ ນົດ ໂດຍຜ່ານການກວດກາຈາກ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

**ມາດຕາ 16 ການໂຄສະນາຢາປາບສັດຕູພືດ**

ການໂຄສະນາຢາປາບສັດຕູພືດ ຕ້ອງໃຫ້ຖືກກັບເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບ ອະນຸຍາດ. ສໍາລັບເນື້ອໃນການໂຄສະນາຕ້ອງຊັດເຈນ ຖືກຕ້ອງຕາມຄວາມເປັນຈິງຂອງປະເພດ, ຊະນິດ, ຄຸນ ລັກຊະນະ, ຄຸນນະ ພາບ ຂອງຢາປາບສັດຕູພືດ, ເຄື່ອງໝາຍການຄ້າລະດັບຄວາມເປັນອັນຕະລາຍ ແລະ ມາດ ຕະການປ້ອງກັນຄວາມປອດໄພ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງໂຄສະນາກ່ຽວກັບຢາປາບສັດຕູພືດ ຕ້ອງຂໍອະນຸ ຍາດ ຈາກຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 17 ການນໍາເຂົ້າ**

ການນໍາເຂົ້າຢາປາບສັດຕູພືດ ຕ້ອງປະຕິບັດ ດັ່ງນີ້:

1. ຮັບປະກັນ ການຫຸ້ມຫໍ່, ຕິດສະຫຼາກ ແລະ ຂົນສົ່ງຢາປາບສັດຕູພືດໃຫ້ມີຄວາມປອດໄພ;
2. ຮັບປະກັນຄຸນນະພາບຂອງຢາປາບສັດຕູພືດທີ່ນໍາເຂົ້າ;
3. ນໍາເຂົ້າຕາມດ່ານທີ່ກໍານົດໄວ້ໃນໃບອະນຸຍາດນໍາເຂົ້າ ແລະ ໄດ້ຮັບການກວດກາຢ່າງຖືກຕ້ອງ ແລະ ຄົບຖ້ວນ ຂອງຢາປາບສັດຕູພືດຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
4. ມີການເກັບຮັກສາ ແລະ ມີໄວ້ໃນຄອບຄອງຖືກຕ້ອງຕາມເຕັກນິກ;
5. ປະຕິບັດຕາມຂັ້ນຕອນ, ເງື່ອນໄຂ ແລະ ມາດຕະຖານຂອງກະຊວງກະສິກໍາ ແລະ ປ່າໄມ້ກໍານົດ ໄວ້ໃນແຕ່ລະໄລຍະ.

**ມາດຕາ 18 ການສົ່ງຜ່ານ ແລະ ການຂົນສົ່ງ**

ການຂົນສົ່ງຢາປາບສັດຕູພືດຜ່ານແຂວງອັດຕະປື ຕ້ອງແຈ້ງໃຫ້ຂະແໜງປູກຝັງ ພະແນກ ກະສິກໍາ ແລະ ປ່າໄມ້ແຂວງຢ່າງໜ້ອຍ 10 ວັນລັດຖະການ ກ່ອນການສົ່ງຜ່ານ ແລະ ໃຫ້ປະຕິບັດຕາມເງື່ອນໄຂດັ່ງນີ້:

1. ຮັບປະກັນຄວາມປອດໄພໃນການຂົນສົ່ງ, ບໍ່ໃຫ້ພາຊະນະບັນຈຸຮົ່ວຊຶມ ຫຼື ການແຜ່ກະຈາຍຂອງ ຢາປາບສັດຕູພືດ;
2. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ, ສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ ທີ່ ສປປ ລາວ ເປັນພາຄີ.

ການຂົນສົ່ງຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດທີ່ນໍາເຂົ້າ, ສົ່ງຜ່ານ, ຈໍາໜ່າຍ ແລະ ນໍາ ໃຊ້ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີຜູ້ຂັບຂີ່ທີ່ມີປະສົບການ ແລະ ຄວາມຮູ້ພື້ນຖານກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດ ໄພ ກ່ຽວກັບຢາປາບສັດຕູພືດ;
2. ມີລົດຂົນສົ່ງສະເພາະ ຕາມມາດຕະຖານເຕັກນິກທີ່ກ່ຽວຂ້ອງ;

3. ຂົນສົ່ງຕາມເສັ້ນທາງທີ່ໄດ້ຮັບອະນຸຍາດ;

4. ສຳເນົາໃບອະນຸຍາດນຳເຂົ້າ ແລະ ເອກະສານອື່ນທີ່ກ່ຽວຂ້ອງຂອງຜູ້ດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍໄປພ້ອມກັບການຂົນສົ່ງ;

5. ມີຖົງມື ແລະ ອຸປະກອນປ້ອງກັນຄວາມປອດໄພ;

6. ມີລົດຂົນສົ່ງທີ່ປິດແຈບ ແລະ ມີປ້າຍເຕືອນອັນຕະລາຍ;

7. ປະຕິບັດຕາມເງື່ອນໄຂອື່ນຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີເກີດອຸປະຕິເຫດ ຫຼື ການຮົ່ວໄຫຼໃນລະຫວ່າງການຂົນສົ່ງ ຜູ້ບໍລິການຂົນສົ່ງ ແລະ ເຈົ້າຂອງຢາ ຕ້ອງແຈ້ງຕໍ່ອົງການຄຸ້ມຄອງຢາປາບສັດຕູພືດທີ່ຢູ່ໃກ້ສຸດໃນທັນໃດໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຫາມາດຕະການແກ້ໄຂອຸປະຕິເຫດດັ່ງກ່າວ, ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ກ່ຽວກັບການບຳບັດ ແລະ ຈຳກັດ ສິ່ງເສດເຫຼືອຢາປາບສັດຕູພືດຕາມແຕ່ລະກໍລະນີ.

**ມາດຕາ 19 ການເກັບຮັກສາ ແລະ ມີໄວ້ໃນຄອບຄອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເກັບຮັກສາ ແລະ ມີໄວ້ໃນຄອບຄອງຢາປາບສັດຕູພືດໃຫ້ແຍກຈາກວັດຖຸອື່ນ ແລະ ໃຫ້ປະຕິບັດຕາມຄຳແນະນຳສຳລັບການເກັບຮັກສາທີ່ຂຽນໄວ້ໃນສະຫຼາກ.

ນອກຈາກນັ້ນສຳລັບຜູ້ນຳເຂົ້າ ແລະ ຈຳໜ່າຍຢາປາບສັດຕູພືດ ຕ້ອງມີ:

1. ສາງເກັບມ້ຽນສະເພາະ ທີ່ຫ່າງໄກຈາກເດີກນອັຍ, ຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ແຫຼ່ງນ້ຳ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ, ມີລະບົບການເກັບຮັກສາຄວາມປອດໄພ ລວມທັງມາດຕະການປ້ອງກັນຕ່າງໆ ໃນເວລາເກີດອຸບັດຕິເຫດ;

2. ການຝຶກອົບຮົມໃຫ້ແກ່ແຮງງານທີ່ເຮັດວຽກໃນສາງເກັບມ້ຽນ ກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດໄພ ແລະ ມີປ້າຍເຕືອນອັນຕະລາຍໃນສາງເກັບມ້ຽນ;

3. ປະຕິບັດຕາມເງື່ອນໄຂອື່ນ ທີ່ພະແນກ ກະສິກຳ ແລະ ປ່າໄມ້ກຳນົດໄວ້.

ໃນກໍລະນີເກີດອຸປະຕິເຫດ ຫຼື ມີການຮົ່ວໄຫຼໃນໄລຍະການເກັບຮັກສາ ຫຼື ຄອບຄອງ ຜູ້ເກັບຮັກສາ ຫຼື ເຈົ້າຂອງຕ້ອງແຈ້ງຕໍ່ອົງການຄຸ້ມເຈົ້າຂອງຢາ ຕ້ອງແຈ້ງຕໍ່ອົງການຄຸ້ມຄອງຢາປາບສັດຕູພືດທີ່ຢູ່ໃກ້ສຸດໃນທັນໃດໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຫາມາດຕະການແກ້ໄຂອຸປະຕິເຫດດັ່ງກ່າວ, ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ກ່ຽວກັບການບຳບັດ ແລະ ຈຳກັດ ສິ່ງເສດເຫຼືອຢາປາບສັດຕູພືດຕາມແຕ່ລະກໍລະນີ.

**ມາດຕາ 20 ການນຳໃຊ້**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ຢາປາບສັດຕູພືດໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ເປັນຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການ ນຳກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້;

2. ນຳໃຊ້ເທົ່າທີ່ຈຳເປັນ ເພື່ອຫຼຸດຜ່ອນຄວາມສ່ຽງຈາກຢາປາບສັດຕູພືດ ພາຍຫຼັງປະຕິບັດຕາມຫຼັກການ ການປ້ອງກັນພືດແບບປະສົມປະສານ;

3. ຄັດເລືອກຢາປາບສັດຕູພືດທີ່ເໝາະສົມ ເພື່ອນຳໃຊ້ເຂົ້າໃນການກຳຈັດສັດຕູພືດ ແລະ ພືດເປົ້າໝາຍຕາມທີ່ກຳນົດໄວ້ໃນສະຫຼາກ;

4. ປະຕິບັດຕາມຄຳແນະນຳການນຳໃຊ້ ແລະ ໄລຍະເວລາຢຸດໃຊ້ກ່ອນເກັບກ່ຽວພືດທີ່ກຳນົດໄວ້ໃນສະຫຼາກ;

5. ປະຕິບັດຕາມເຕັກນິກວິຊາການ ໃນການນຳໃຊ້ຢາປາບສັດຕູພືດ ໃຫ້ຖືກຕ້ອງ ແລະ ເໝາະສົມ ເພື່ອຮັບ ປະກັນປະສິດທິພາບ ແລະ ຄວາມປອດໄພ ຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ;

6. ມີອຸປະກອນ ແລະ ເຄື່ອງມືປ້ອງກັນຄວາມປອດໄພ ພ້ອມທັງຮັບປະກັນຄວາມປອດໄພຕໍ່ຄົນ,ສັດ ແລະ ສິ່ງແວດລ້ອມບໍລິເວນໃກ້ຄຽງ ຕິດປ້າຍເຕືອນອັນຕະລາຍ ກ່ອນ ແລະ ພາຍຫຼັງການນໍາໃຊ້;

7. ເກັບຮັກສາໃຫ້ມີຄວາມປອດໄພ ແລະ ກໍາຈັດທໍາລາຍສິ່ງເສດເຫຼືອຂອງຢາທັນທີໃຫ້ຖືກຕ້ອງຕາມຂໍ້ແນະນໍາພາຍຫຼັງການນໍາໃຊ້;

8. ມີການກວດກາສຸຂະພາບປະຈໍາປີສໍາລັບຜູ້ນໍາໃຊ້.

ໃນກໍລະນີເກີດອຸປະຕິເຫດ ຫຼື ມີການເບື່ອໃນໄລຍະການນໍາໃຊ້ ຜູ້ນໍາໃຊ້ຕ້ອງປະຕິບັດຕາມຄໍາແນະນໍາເບື້ອງຕົ້ນໃນສະຫຼາກ ແລະ ຮີບສົ່ງໄປໂຮງໝໍໃນທັນທີ ພ້ອມທັງແຈ້ງສາຍເຫດໃຫ້ແພດໝໍຮັບຮູ້ ແລະ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດທີ່ໃກ້ສຸດໃນທັນໃດ ເພື່ອຫາມາດຕະການແກ້ໄຂອຸປະຕິເຫດດັ່ງ ກ່າວ.

ສໍາລັບຜົນເສຍຫາຍທີ່ເກີດຂຶ້ນຕໍ່ຊີວິດ, ສຸຂະພາບ ແລະ ສິ່ງແວດລ້ອມແມ່ນໃຫ້ຜູ້ນໍາໃຊ້ເປັນຜູ້ຮັບຜິດຊອບ ໃນການບໍາບັດ, ຟື້ນຟູ ແລະ ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ ໃນອຸປະຕິເຫດດັ່ງກ່າວ.

**ມາດຕາ 21 ການຕິດຕາມ ແລະ ລາຍງານກ່ຽວກັບຢາປາບສັດຕູພືດ**

ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງ ຖິ່ນກ່ຽວກັບການສ້າງແຜນການສໍາຫຼວດຄວາມສ່ຽງຢາປາບສັດຕູພືດ ເພື່ອຕິດຕາມເກັບກໍາຂໍ້ມູນ ກ່ຽວກັບການຜະ ລິດ, ນໍາເຂົ້າ, ການຈໍາໜ່າຍ, ການນໍາໃຊ້, ປະສິດທິພາບ, ຜົນກະທົບ ແລະ ສານຕົກຄ້າງຂອງຢາປາບສັດຕູພືດ ລວມທັງຢາປາບສັດຕູພືດທີ່ຫ້າມນໍາໃຊ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເປັນເຈົ້າການລາຍງານຕໍ່ອົງການຄຸ້ມຄອງວຽກງານຢາປາບສັດຕູພືດທີ່ຢູ່ໃກ້ທີ່ສຸດຊາບ ເມື່ອພົບເຫັນຢາປາບສັດຕູພືດທີ່ຫ້າມນໍາໃຊ້, ການເບື່ອ ຫຼື ປະກົດການຜົນກະທົບທີ່ເກີດຂຶ້ນຈາກຢາປາບສັດຕູພືດ, ການນໍາໃຊ້ ແລະ ການເຄື່ອນໄຫວກິດຈະການຢາປາບສັດຕູພືດທີ່ບໍ່ຖືກຕ້ອງຕາມລະບຽບການ.

**ມາດຕາ 22 ການບໍາບັດ ແລະ ຈໍາກັດຢາປາບສັດຕູພືດ**

ຢາປາບສັດຕູພືດປອມ, ເສຍຄຸນລັກສະນະ, ບໍ່ໄດ້ມາດຕະຖານ ແລະ ສິ່ງເສດເຫຼືອຢາປາບສັດຕູພືດຕ້ອງບໍາບັດ ຫຼື ກໍາຈັດ ຕາມວິທີການທີ່ກໍານົດໄວ້, ໃນກໍລະນີບໍ່ສາມາດບໍາບັດ ຫຼື ກໍາຈັດໄດ້ ຕ້ອງເກັບຮັກສາໄວ້ໃນບ່ອນທີ່ປອດໄພ ແລະ ແຈ້ງຕໍ່ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອກໍານົດມາດຕະການແກ້ໄຂທີ່ເໝາະສົມ.

ການບໍາບັດ ແລະ ກໍາຈັດຢາປາບສັດຕູພືດ ຕ້ອງປະຕິບັດຕາມຄູ່ມືແນະນໍາ ແລະ ນໍາໃຊ້ເຕັກໂນໂລຊີ ທີ່ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມກໍານົດ. ຄ່າໃຊ້ຈ່າຍໃນການບໍາບັດ ຫຼື ກໍາຈັດຢາປາບສັດຕູພືດ ໃຫ້ເປັນຄວາມຮັບຜິດຊອບຂອງເຈົ້າຂອງຢາ.

## ໝວດທີ 4
## ທຸລະກິດຢາປາບສັດຕູພືດ

**ມາດຕາ 23 ການດໍາເນີນທຸລະກິດຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຢາກດໍາເນີນທຸລະກິດກ່ຽວກັບຢາປາບສັດຕູພືດຕ້ອງໄດ້ຂຶ້ນທະບຽນວິສາຫະກິດ ນໍາຂະແໜງອຸດສະຫະກໍາ ແລະ ການຄ້າ ຕາມກົດໝາຍວິສາຫະກິດ, ພາຍຫຼັງໄດ້ທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດການເຄື່ອນໄຫວ ກິດຈະການກ່ຽວກັບຢາປາບສັດຕູພືດ ນໍາຂະແໜງ ການກະສິກໍາ ແລະ ປ່າໄມ້.

**ມາດຕາ 24 ປະເພດທຸລະກິດຢາປາບສັດຕູພືດ**

ປະເພດຂອງຢາປາບສັດຕູພືດ ມີດັ່ງນີ້:

1. ທີ່ປຶກສາດ້ານຢາປາບສັດຕູພືດ;
2. ການຜະລິດຢາປາບສັດຕູພືດ;
3. ການນຳເຂົ້າ ແລະ ຈຳໜ່າຍຢາປາບສັດຕູພືດ;
4. ການບໍລິການດ້ານຢາປາບສັດຕູພືດ;
5. ການບຳບັດ ແລະ ຈຳກັດຢາປາບສັດຕູພືດ;
6. ການວິໄຈ ແລະ ທົດສອບ ຢາປາບສັດຕູພືດ;
7. ທຸລະກິດອື່ນທີ່ກ່ຽວຂ້ອງກັບຢາປາບສັດຕູພືດທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດ.

**ມາດຕາ 25 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດຢາປາບສັດຕູພືດ**

ຜູ້ດຳເນີນທຸລະກິດຢາປາບສັດຕູພືດມີສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນໃຫ້ຖືກຕ້ອງຕາມການອະນຸຍາດ;
2. ການນຳເຂົ້າ, ການຈຳໜ່າຍ ແລະ ການບໍລິການດ້ານຢາປາບສັດຕູພືດ ຕ້ອງຕິດບັນຊີຢາປາບສັດຕູພືດຕ້ອງຫ້າມ ແລະ ມີໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ຕາມທີ່ກຳນົດໄວ້ໃນມາດຕາ 14 ແລະ 38 ຂອງດຳລັດສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
3. ເປັນເຈົ້າການໃນການຮັກສາຄວາມປອດໄພ ພ້ອມທັງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການດຳເນີທຸລະກິດຂອງຕົນ;
4. ສະເໜີຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
5. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນຕາມກົດໝາຍ ແລະ ລະບຽບການ;
6. ໃຫ້ການຮ່ວມື, ສະໜອງຂໍ້ມູນ ແລະ ອຳນວຍຄວາມສະດວກໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
7. ແຈ້ງ ແລະ ລາຍງານສະພາບເຫດການ ໃນກໍລະນີພົບເຫັນຢາປາບສັດຕູພືດທີ່ຫ້າມນຳໃຊ້ ແລະ ການເຄື່ອນ ໄຫວກິດຈະການຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມລະບຽບການ.

**ມາດຕາ 26 ການໂຈະ ແລະ ການຖອນໃບອະນຸຍາດດຳເນີນທຸລະກິດ**

ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ມີສິດໂຈະການດຳເນີທຸລະກິດຢາປາບສັດຕູພືດໃດໜຶ່ງ ຖ້າເຫັນວ່າຜູ້ດຳເນີນທຸລະກິດລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ.

ໃນກໍລະນີມີການລະເມີດທີຮ້າຍແຮງ ຫຼື ບໍ່ປະຕິບັດຕາມການແນະນຳຂອງພະແນກ ກະສິກຳ ແລະ ປ່າໄມ້ແຂວງ ມີສິດຖອນໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ແລະ ສະເໜີຂະແໜງການອຸດສະຫະກຳ ແລະ ການຄ້າ ພິຈາລະນາຍົກເລີກໃບທະບຽນວິສາຫະກິດ.

## ໝວດທີ 5
## ການຄຸ້ມຄອງວຽກງານຢາປາບສັດຕູພືດ

**ມາດຕາ 27 ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຂັ້ນທ້ອງຖິ່ນ**

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຂັ້ນທ້ອງຖິ່ນ ປະກອບດ້ວຍ:

1. ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ**

ໃນການຄຸ້ມຄອງວຽກງານຢາປາບສັດຕູພືດ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຢາປາບສັດຕູພືດ;
2. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຢາປາບສັດຕູພືດ;
3. ຄົ້ນຄວ້າ ແລະ ນຳສະເໜີເຈົ້າແຂວງ ພິຈາລະນາອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຢາປາບສັດຕູພືດ;
4. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ແລະ ໃບອະນຸຍາດອື່ນກ່ຽວກັບການນຳເຂົ້າ, ການຈຳໜ່າຍ ແລະ ການບໍລິການດ້ານຢາປາບສັດຕູພືດ;
5. ບຳລຸງ, ຍົກລະດັບບຸກຄະລາກອນຂັ້ນເມືອງ ກ່ຽວກັບວຽກງານຄຸ້ມຄອງ, ກວດກາ ແລະ ການນຳໃຊ້ຢາປາບສັດຕູພືດ;
6. ແຕ່ງຕັ້ງ ຫຼື ຍົກຍ້າຍ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຂັ້ນແຂວງ ແລະ ຂັ້ນເມືອງ;
7. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບວຽກງານຢາປາບສັດຕູພືດ;
8. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
9. ປະສານສົມທົບກັບພະແນກການ, ຫ້ອງການປົກຄອງເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ໃນການຄຸ້ມຄອງວຽກງານຢາປາບສັດຕູພືດ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຢາປາບສັດຕູພືດ;
3. ຄົ້ນຄວ້າ ແລະ ນຳສະເໜີເຈົ້າເມືອງ ພິຈາລະນາ ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຢາປາບສັດຕູພືດ;
4. ຝຶກອົບຮົມກ່ຽວກັບການຄຸ້ມຄອງ, ການນຳໃຊ້ ແລະ ການເກັບຮັກສາຢາປາບສັດຕູພືດໃຫ້ແກ່ຊາວກະ ສິກອນ;
5. ສະເໜີພະແນກ ກະສິກຳ ແລະ ປ່າໄມ້ແຂວງ ພິຈາລະນາແຕ່ງຕັ້ງ ຫຼື ຍົກຍ້າຍ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດຂັ້ນເມືອງ;
6. ຝຶກອົບຮົມໃຫ້ແກ່ຜູ້ດຳເນີນທຸລະກິດຢາປາບສັດຕູພືດ ເພື່ອໃຫ້ມີຄວາມຮູ້ກ່ຽວກັບວຽກງານຢາປາບສັດຕູພືດ;
7. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບວຽກງານຢາປາບສັດຕູພືດ;

8. ປະສານສົມທົບກັບພາກສ່ວນອື່ນໃນການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ໃຫ້ພະແນກ ກະສິກຳ ແລະ ປ່າ ໄມ້ແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ໃນການຄຸ້ມຄອງຢາປາບສັດຕູພືດຂອງຂະແໜງການອື່ນ ເປັນຕົ້ນ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກສາທາລະນະສຸກແຂວງ, ພະແນກອຸດສະຫະກຳ ແລະ ການຄ້າແຂວງ, ປກສ ແຂວງ, ປກຊ ແຂວງ, ພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ, ພະແນກການອື່ນທີ່ກ່ຽວຂ້ອງ, ອົງການລັດທຽບເທົ່າພະແນກ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຢາປາບສັດຕູພືດ ແລະ ຮ່ວມມືກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຕາມພາລະບົດບາດຂອງຕົນ.

**ໝວດທີ 6**

**ການກວດກາວຽກງານຢາປາບສັດຕູພືດ**

**ມາດຕາ 31 ອົງການກວດກາວຽກງານຢາປາບສັດຕູພືດຂັ້ນທ້ອງຖິ່ນ**

ອົງການກວດກາວຽກງານຢາປາບສັດຕູພືດຂັ້ນທ້ອງຖິ່ນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງຢາປາບສັດຕູພືດຂັ້ນທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ, ອົງການກວດກາພັກ-ລັດແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 32 ເນື້ອໃນການກວດກາ**

ການກວດກາວຽກງານຢາປາບສັດຕູພືດປະກອບ ມີເນື້ອໃນຕົ້ນຕໍດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ;
2. ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
3. ການນຳໃຊ້ ແລະ ການດຳເນີນທຸລະກິດ ຢາປາບສັດຕູພືດ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານຢາປາບສັດຕູພືດ.

**ມາດຕາ 33 ຮູບການກວດກາ**

ການກວດກາວຽກງານຢາປາບສັດຕູພືດ ມີ 3 ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໃຫ້ມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບສຸກເສີນ.

ການກວດກາຕາມລະບົບປົກກະຕິແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນຢ່າງໜ້ອຍ 01 ຄັ້ງຕໍ່ປີ.

ການກວດກາໂດຍໃຫ້ມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບສຸກເສີນ ແມ່ນການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ. ສໍາລັບຂັ້ນຕອນ, ວິທີການກວດກາ ໄດ້ກໍານົດໄວ້ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34 ເຈົ້າໜ້າທີ່ກວດກາຢາປາບສັດຕູພືດຂັ້ນທ້ອງຖິ່ນ**

ເຈົ້າໜ້າທີ່ກວດກາຢາປາບສັດຕູພືດຂັ້ນທ້ອງຖິ່ນ ແມ່ນພະນັກງານວິຊາການປູກຝັງ ຊຶ່ງຖືກແຕ່ງຕັ້ງຢ່າງເປັນທາງການຈາກພະແນກກະສິກໍາ ແລະ ປ່າໄມ້ແຂວງ ໃຫ້ປະຕິບັດວຽກງານກວດກາຢາປາບສັດຕູພືດຢູ່ຂັ້ນແຂວງ ຫຼື ຂັ້ນເມືອງ.

ສໍາລັບມາດຕະຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດຂັ້ນທ້ອງຖິ່ນ ແມ່ນໄດ້ກໍານົດໄວໃນລະບຽບການຕ່າງຫາກ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດຂັ້ນທ້ອງຖິ່ນ**

ເຈົ້າໜ້າທີ່ກວດກາຢາປາບສັດຕູພືດຂັ້ນທ້ອງຖິ່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ແນະນໍາ ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຢາປາບສັດຕູພືດ;
2. ລົງກວດກາສະຖານທີ່ ຮ້ານຈໍາໜ່າຍ, ສາງເກັບມ້ຽນ, ການໂຄສະນາ, ການສົ່ງຜ່ານ, ການຂົນສົ່ງ ແລະ ສະ ຖານທີ່ນໍາໃຊ້ຢາປາບສັດຕູພືດ;
3. ຍຶດຢາປາບສັດຕູພືດ, ອຸປະກອນນໍາໃຊ້ຢາປາບສັດຕູພືດຕ້ອງຫ້າມ ແລະ ເອະສານທີ່ກ່ຽວຂ້ອງກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ ພ້ອມທັງລາຍງານໃຫ້ ພະແນກກະສິກໍາ ແລະ ປ່າໄມ້ແຂວງ ຫຼື ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ເພື່ອນໍາໃຊ້ມາດຕະການທໍາລາຍ ຫຼື ສົ່ງກັບຄືນ ຢາປາບສັດຕູພືດດັ່ງກ່າວຕາມແຕ່ລະກໍລະນີ;
4. ສຶກສາອົບຮົມ, ປັບໄໝ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວກັບວຽກງານຢາປາບສັດຕູພືດ ພ້ອມທັງແຈ້ງເຕືອນຜູ້ລະເມີດ;
5. ປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງເພື່ອນໍາໃຊ້ມາດຕະການຕ່າງໆທີ່ຈໍາເປັນ ເປັນຕົ້ນ ການສັ່ງໃຫ້ຢຸດລົດ ເພື່ອກວດຄົ້ນ ຫຼື ເຂົ້າໄປໃນສະຖານທີ່ໃດໜຶ່ງທີ່ສົງໃສ ຫຼື ເປົ້າໝາຍອາມີການລະເມີດ ລວມທັງຍຶດຂອງກາງ ຫຼື ຢາປາບສັດຕູພືດຕ້ອງຫ້າມໄວ້ໃນຄອບຄອງ;
6. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາເອກະສານ, ກວດກາເອກະສານ ແລະ ເອົາຄໍາໃຫ້ການເບື້ອງຕົ້ນ ທີ່ເຫັນວ່າມີການລະເມີດ;
7. ເກັບຕົວຢ່າງຢາປາບສັດຕູພືດ ເພື່ອນໍາສະເໜີພາກສ່ວນທີ່ກ່ຽວຂ້ອງ ນໍາໄປວິໄຈຄຸນນະພາບ ຫຼື ນໍາໃຊ້ເປັນຫຼັກຖານ;
8. ສະຫຼຸບຜົນການກວດກາ ແລະ ປະກອບເອກະສານ ສົ່ງໃຫ້ອົງການຄຸ້ມຄອງຢາປາບສັດຕູພືດຂັ້ນທ້ອງຖິ່ນເປັນຂັ້ນຕົ້ນ ຫຼື ເຈົ້າໜ້າທີ່ ສືບສວນ-ສອບສວນ ເພື່ອແກ້ໄຂ ຫຼື ດໍາເນີນຄະດີຕາມກົດໝາຍ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 36 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດຢາປາບສັດຕູພືດ**

ຫ້າມຜູ້ດໍາເນີນທຸລະກິດຢາປາບສັດຕູພືດ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດຢາປາບສັດຕູພືດໂດຍບໍ່ໄດ້ຮັບອະນຸຍາດ;

2. ນຳເຂົ້າ, ສົ່ງຜ່ານ, ຂົນສົ່ງ, ນຳໃຊ້ ຫຼື ຈຳໜ່າຍຢາປາບສັດຕູພືດທີ່ບໍ່ໄດ້ຂຶ້ນທະບຽນ, ຢາປາບສັດຕູພືດປອມ, ຢາປາບສັດຕູພືດເສຍຄຸນລັກສະນະ ແລະ ຢາປາບສັດຕູພືດບໍ່ໄດ້ມາດຕະຖານ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ;

3. ຖ່ຽນຖ່າຍ ຫຼື ແບ່ງຢາປາບສັດຕູພືດ ຈາກພາຊະນະບັນຈຸເດີມ ເພື່ອຂາຍ ແລະ ນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານຢາປາບສັດຕູພືດ;

4. ປ່ຽນແປງການຫຸ້ມຫໍ່, ເນື້ອໃນ ຫຼື ອົງປະກອບໃນສະຫຼາກຢາປາບສັດຕູພືດ;

5. ໃຫ້ລາງວັນ ຫຼື ຂອງຂວັນ ເພື່ອຊຸກຍູ້ການຊື້ ຫຼື ນຳໃຊ້ຢາປາບສັດຕູພືດຂອງຕົນ ຍົກເວັ້ນເຄື່ອງປ້ອງກັນຕົວກ່ຽວກັບການນຳໃຊ້ຢາປາບສັດຕູພືດ;

6. ໂຄສະນາ ຫຼື ໃສ່ຮ້າຍປ້າຍສີຜູ້ດຳເນີນທຸລະກິດອື່ນ;

7. ຈຳໜ່າຍຢາປາບສັດຕູພືດໃຫ້ຜູ້ຂາຍຍ່ອຍ ຫຼື ຜູ້ຈຳໜ່າຍອື່ນທີ່ບໍ່ມີໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;

8. ບຳບັດ ຫຼື ຈຳກັດ ສິ່ງເສດເຫຼືອຈາກຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ;

9. ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ, ປອມແປງເອກະສານ ກ່ຽວກັບວຽກງານຢາປາບສັດຕູພືດ;

10. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຂໍ້ຫ້າມສຳລັບຜູ້ນຳໃຊ້ຢາປາບສັດຕູພືດ**

ຫ້າມຜູ້ນຳໃຊ້ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ຢາປາບສັດຕູພືດທີ່ບໍ່ໄດ້ຂຶ້ນທະບຽນ;
2. ນຳໃຊ້ຢາປາບສັດຕູພືດໂດຍບໍ່ຖືກຕ້ອງຕາມຫຼັກວິຊາການ;
3. ນຳໃຊ້ຢາປາບສັດຕູພືດໃກ້ແຫຼ່ງນ້ຳທີ່ບໍລິໂພກ;
4. ຫ້າມເດັກນ້ອຍອາຍຸຕ່ຳກວ່າສິບຫ້າປີ ແລະ ຜູ້ຍິງຖືພາມາໃຊ້ຢາປາບສັດຕູພືດ;
5. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 38 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ຕຳແໜ່ງ ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດໃສ່ຕົນຫຼື ພັກພວກ;
2. ເປີດເຜີຍຄວາມລັບທາງລັດຖະການ ຫຼື ຂອງຜູ້ດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຮັບສິນບົນ, ກົດໜ່ວງຖ່ວງດຶງເອກະສານ;
4. ປອມແປງເອກະສານ ຫຼື ອອກເອກະສານທີ່ບໍ່ຖືກຕ້ອງ;
5. ເພີ່ມ ຫຼື ຫຼຸດຄ່າທຳນຽມ, ຄ່າບໍລິການວິຊາການ ຫຼື ນຳໃຊ້ຈາກວຽກງານຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມລະບຽບການ;
6. ຂາດຄວາມຮັບຜິດຊອບ ຫຼື ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີນເລີ້ ເຊິ່ງພາໃຫ້ເກີດຄວາມເສຍຫາຍ;
7. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 39 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 40 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ,ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ພະແນກກະສິກຳ ແລະ ປ່າໄມ້ແຂວງອັດຕະປື ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 42 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ວັນລົງລາຍເຊັນປະກາດໃຊ້ເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອັດຕະປື ເຈົ້າແຂວງ

ເລັດ ໄຊຍະພອນ